ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
**************

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມການເງິນ ເລກທີ: /ຍທຂ.ກກງ

ນະຄອນ ຫຼວງວຽງຈັນ, ວັນທີ: _______________

ຮຽນ: - ທ່ານຫົວໜ້າຫ້ອງການກະຊວງ ຍທຂ ທີ່ນັບຖື
- ທ່ານຫົວໜ້າອະນຸກຳມະການ ກະກຽມເນື້ອໃນກອງປະຊຸມໃຫຍ່ ຍທຂ

ເລື່ອງ: **ບົດລາຍງານການຄົ້ນຄ້ວາຫຼັກການໃນການຈັດສັນງົບປະມານ ສົກປີ 2014-2015 ແລະ ການນຳໃຊ້ທຶນກອງທຶນບູລະນະຮັກສາທາງຫຼວງ ເພື່ອປະກອບໃນກອງປະຊຸມໃຫຍ່ ຍທຂ.**

- ອີງຕາມດຳລັດຂອງທ່ານນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ: **373** /ນຍ, ລົງວັນທີ 22 ຕຸລາ 2008;
- ອີງຕາມດຳລັດຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ກອງທຶນບູລະນະຮັກສາທາງຫຼວງ ສະບັບເລກທີ 09/ນຍ ລົງວັນທີ 15 ມັງກອນ 2001;
- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການ ວ່າດ້ວຍລະບຽບການຄຸ້ມຄອງການເງິນກອງທຶນບູລະນະຮັກສາທາງຫຼວງ ສະບັບເລກທີ 5131/ຍທຂ ລົງວັນທີ 22 ເມສາ 2013.

ຄະນະກຳມະການຄົ້ນຄ້ວາ ປັບປຸງດຳລັດ 09/ນຍ ແລະ ຈັດສັນງົບປະມານສົກປີ 2014-15, ຂໍຮຽນລາຍງານມາຍັງທ່ານຊາບວ່າຄະນະກຳມະການຄົ້ນຄ້ວາປັບປຸງໄດ້ສະເໜີຫຼັກການໃນການຈັດສັນທຶນດັ່ງກ່າວໃນກອງປະຊຸມຄະນະນຳ ກະຊວງ ແລະ ກອງປະຊຸມ ກໍ່ໄດ້ເຫັນດີໂດຍພື້ນຖານ ຕໍ່ການສະເໜີຂອງຄະນະເພື່ອເປັນທິດທາງໃນການຈັດສັນງົບປະມານ ແລະ ນຳໃຊ້ທຶນກອງທຶນບູລະນະຮັກສາທາງຫຼວງ ເພື່ອເປັນບ່ອນອີງໃນການຄົ້ນຄວ້າ, ຈັດແບ່ງແຜນການງົບປະມານ ສົກປີ 2014-2015 ມີລາຍລະອຽດລຸ່ມນີ້:

1) ໃຫ້ຈັດແບ່ງທຶນ 35% ຂອງແຜນງົບປະມານທີ່ສະພາແຫ່ງຊາດອະນຸມັດ ສົກປີ 2014-2015 ເພື່ອໄປຊຳລະໜີ້ສິນຜ່ານມາ ຂອງບັນດາໜ້າວຽກທີ່ປະຕິບັດສຳເລັດຜ່ານມາ.
   - ➢ ອີງຕາມແຈ້ງການລັດຖະບານວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານ ສົກປີ 2014-15
   - ➢ ໃນຕົວຈິງການຈັດສັນງົບປະມານໃນ ສົກປີ 2014-15 ສ່ວນຫຼາຍແມ່ນກໍ່ແມ່ນຊຳລະໜີ້ ເຊິ່ງມີມູນຄ່າເກີນກ່ວາ 35% ຕາມການແຈ້ງການແນະນຳຂອງລັດຖະບານ ຢູ່ແລ້ວ.

2) ພື້ນຖານໃນການຈັດແບ່ງງົບປະມານແມ່ນສຸມໃສ່ວຽກງານຂະແໜງຂົວທາງ ໂດຍມີເປົ້າໝາຍໃນການຈັດແບ່ງໃສ່ບັນດາໜ້າວຽກຕ່າງໆ ດັ່ງລຸ່ມນີ້:
   - ➢ ວຽກບູລະນະຮັກສາຕາໜ່າງທາງຫຼວງແຫ່ງຊາດ (ຈັດແບ່ງງົບປະມານໃຫ້ 70%) ການຈັດແບ່ງງົບປະມານໃນແຕ່ລະສົກປີແມ່ນເລັ່ງໃສ່ຈັດວຽກບູລະນະຮັກສາຕາໜ່າງທາງຫຼວງແຫ່ງຊາດ,ເຊິ່ງກໍ່ແມ່ນເປົ້າໝາຍຫຼັກຂອງການສ້າງຕັ້ງກອງທຶນບູລະນະຮັກສາທາງໃນເບື້ອງຕົ້ນ.
   - ➢ ວຽກບູລະນະຮັກສາທາງຫຼວງທ້ອງຖິ່ນ (ຈັດແບ່ງງົບປະມານໃຫ້ 15%) ການຈັດແບ່ງງົບປະມານແຕ່ລະສົກປີຂອງບັນດາພະແນກ ຍທຂ ປະຈຳແຂວງ ເຂົ້າໃສ່ ວຽກບູລະນະຮັກສາຕາໜ່າງທາງຫຼວງທ້ອງຖິ່ນ, ໂດຍແຜນຄວາມຕ້ອງການດັ່ງກ່າວ ຈະໄດ້ສະເໜີເຂົ້າໃນແຜນການຂອງກອງທຶນທາງ ແລະ ສັງລວມເປັນແຜນຂອງກະຊວງ ຍທຂ.

3) ວຽກຄວາມປອດໄພຕາມທ້ອງຖະໜົນ (ຈັດແບ່ງງົບປະມານໃຫ້ 5%) ການຈັດແບ່ງງົບປະມານແຕ່ລະສົກປີ ໃຫ້ແກ່ວຽກຄວາມປອດໄພຕາມທ້ອງຖະໜົນ ແມ່ນອີງໃສ່ການຈັດບຸລິມມະສິດໃນແຜນຍຸດທະສາດຂອງຄະນະກຳມະການແຫ່ງຊາດດ້ານ ຄວາມປອດໄພຕາມທ້ອງຖະໜົນ.

4) ວຽກອົງການພັດທະນາ ແລະ ບໍລິຫານຕົວເມືອງ (ຈັດແບ່ງງົບປະມານໃຫ້ 5%) ການຈັດແບ່ງງົບປະມານແຕ່ລະສົກປີ ໃຫ້ແກ່ ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບ), ເຊິ່ງຈັດຕັ້ງປະຕິບັດສະເພາະ ຢູ່ນະຄອນຫຼວງວຽງຈັນ.

5) ວຽກຄຸ້ມຄອງ ແລະ ບໍລິຫານ ກອງທຶນທາງທົ່ວປະເທດ (ຈັດແບ່ງງົບປະມານໃຫ້ 5%) ການຈັດແບ່ງງົບປະມານ ເພື່ອຄຸ້ມຄອງ, ບໍລິຫານ, ການກະກຽມເພື່ອສ້າງ ແລະ ປັບປຸງ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບກອງທຶນທາງໃນທົ່ວປະເທດ.

ນອກນັ້ນ, ຍັງໄດ້ຄົ້ນຄ້ວາ ການຈັດແບ່ງງົບປະມານ ລາຍຮັບສ່ວນເກີນ/ຍັງເຫຼືອ ຈາກການອະນຸມັດແຜນລາຍຈ່າຍຂອງສະພາແຫ່ງຊາດ ສົກປີ 2013-2014 ແລະ ແຜນຄາດຄະເນລາຍຮັບ ສົກປີ 2014-2015 ໂດຍກະຊວງ ຍທຂ ຈະນຳສະເໜີໃຫ້ລັດຖະບານອະນຸມັດ ແລະ ນຳສະເໜີຕໍ່ສະພາແຫ່ງຊາດ ເພື່ອຮັບຮອງເອົາແຜນການ, ໂດຍຈະໄດ້ຈັດແບ່ງທຶນລະອຽດດັ່ງລຸ່ມນີ້:

1) ຈັດແບ່ງງົບປະມານ 50% ເພື່ອໄປສຳລະໜີ້ສິນໄພພິບັດ, ວຽກສຸກເສີນ ຂອງຕາໜ່າງທາງຫຼວງແຫ່ງຊາດທີ່ໄດ້ປະຕິບັດສຳເລັດແລ້ວ. ໂດຍອີງຕາມບົດແນະນຳຂອງກະຊວງ ຜທ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດ ງົບປະມານແຫ່ງລັດ ສົກປີ 2014-15.

2) ຈັດແບ່ງງົບປະມານ 40% ໃຫ້ວຽກງານເຊັ່ນ:
- ກະກຽມໃນການແກ້ໄຂວຽກໄພພິບັດ ແລະ ວຽກສຸກເສີນ ພາຍໃນປີ ທີ່ຈະເກີດຂຶ້ນ,
- ສົມທົບທຶນກັບໂຄງການຮ່ວມມືສາກົນ,
- ວຽກບຸລິມມະສິດອື່ນໆ ຕາມການຊີ້ນຳຂອງກະຊວງ ຍທຂ.
  (ສ່ວນຂັ້ນຕອນ, ການຄັດເລືອກ ແລະ ວິທີການ ໃນການຈັດຕັ້ງປະຕິບັດຕົວຈິງ, ສະເໜີໃຫ້ກົມຂົວທາງເປັນເຈົ້າການໃນການສະຫຼຸບສັງລວມ ແລະ ສະເໜີຂໍອະນຸມັດຮັບຮອງຈາກກະຊວງ ຕາມລະບຽບການ ແລະ ຄວນສ້າງລະບຽບການນຳໃຊ້ທຶນສຸກເສີນໄພພິບັດ ແລະ ສ້ອມແປງເສັ້ນທາງ ເພື່ອເປັນບ່ອນອີງ ແລະ ເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດ.

3) ຈັດແບ່ງງົບປະມານ 10% ເພື່ອທົດລອງສ້າງຕັ້ງ ໜ່ວຍງານສ້ອມແປງສຸກເສີນ ແລະ ແກ້ໄຂວຽກຄວາມປອດໄພຕາມທ້ອງຖະໜົນ ຢູ່ພະແນກ ຍທຂ ນະຄອນຫຼວງວຽງຈັນ.

ໝາຍເຫດ: ເອກະສານຊ້ອນທ້າຍ (ຕາຕະລາງ)
- ວຽກງານການເງິນ-ງົບປະມານ
- ວຽກງານກອງທຶນທາງ

ຫົວໜ້າກົມການເງິນ

ກະຊວງໂຍທາທິການ ແລະ ຂົນສົ່ງ

# ລາຍງານ
# ການຈັດສັນງົບປະມານ ສົກປີ 2014-2015 ແລະ ລາຍຮັບ ຂອງກອງທຶນບູລະນະຮັກສາທາງຫຼວງ

**ລາຍງານໂດຍ:** ຄະນະກຳມະການຄົ້ນຄ້ວາແຜນງົບປະມານ
ກອງທຶນບູລະນະຮັກສາທາງຫຼວງ

## ແຜນຄວາມຕ້ອງການງົບປະມານ ສົກປີ 2014-2015

ຫົວໜ່ວຍ ຕື້ກີບ

| ແຜນງົບປະມານ | ຕ້ອງການ | ອະນຸມັດ | ສ່ວນຕ່າງ |
|---|---|---|---|
| 1 ຕາໜ່າງທາງຫຼວງແຫ່ງຊາດ | 882.1 | 284.5 | 597.6 |
| 2 ຕາໜ່າງທາງຫຼວງທ້ອງຖິ່ນ | 83 | 61.6 | 21.4 |
| 3 ຄວາມປອດໄພທາງຖະໜົນ | 12.6 | 12.6 | 0 |
| 4 ອພບ, ທົດແທນການຍຸດເຊົາເກັບຄ່າຈອດລົດໃນ ນະຄອນຫຼວງ | 2.6 | 2.6 | 0 |
| 5 ຄຸ້ມຄອງ ແລະ ບໍລິຫານ | 8.7 | 8.7 | 0 |
| ລວມ | 989 | 370 | 619 |

## ການຈັດສັນງົບປະມານ (ປົກກະຕິ) ສົກປີ 2014-2015

ອັດຕາສ່ວນ, ການປະຕິບັດ, ຈັດສັນ

| ແຜນລາຍຈ່າຍ (100%) | ດຳລັດ 09/ນຍ | ປະຕິບັດ ຕົວຈິງ | ການ ຈັດສັນ |
|---|---|---|---|
| 1 ຕາໜ່າງທາງຫຼວງແຫ່ງຊາດ | 80% | 48-83% | 70% |
| 2 ຕາໜ່າງທາງຫຼວງທ້ອງຖິ່ນ | 10% | 7-49% | 15% |
| 3 ຄວາມປອດໄພທາງຖະໜົນ | 5% | 0.3-5.4% | 5% |
| 4 ອພບ, ທົດແທນການຢຸດເຊົາເກັບຄ່າຈອດລົດໃນ ນະຄອນຫຼວງ | 5% | 0.4-3.3% | 5% |
| 5 ຄຸ້ມຄອງ ແລະ ບໍລິຫານ | ໃນຂໍ້ 1 | 1-17% | 5% |

## ສະເໜີຈັດສັນງົບປະມານ (ສ່ວນເກີນ/ເຫຼືອ) ຈາກສະພາ ອະນຸມັດ

ອັດຕາສ່ວນການຈັດສັນ

| ແຜນລາຍຈ່າຍ (100%) | ການ ຈັດສັນ |
|---|---|
| 1 ຊຳລະໜີ້ໄພພິບັດ, ສຸກເສີນ ຫຼັງຝົນ ທາງຫຼວງແຫ່ງຊາດ | 50% |
| 2 - ແຮໄວ້ແກ້ໄຂວຽກໄພພິບັດ, ວຽກສຸກເສີນ ຕ່າງໆໃນສົກປີ,<br>- ສົມທົບທຶນໂຄງການຮ່ວມມືສາກົນ (ຝ່າຍລາວ 100%),<br>- ວຽກບຸລິມະສິດຕ່າງໆ ທີ່ຈຳເປັນຕາມການຊີ້ນຳ. | 40% |
| 3 ທົດລອງສ້າງໜ່ວຍສ້ອມແປງທາງສຸກເສີນ ໃນພະແນກນະຄອນຫຼວງ | 10% |

## ການຊອກຫາແຫຼ່ງລາຍຮັບເພີ່ມ (ປົ່ມຊ້ອນ)

| ແຫຼ່ງລາຍຮັບ (ປົ່ມຊ້ອນ) | ປະຈຸບັນ 420/ລິດ | ສະເໜີ 600/ລິດ | ສ່ວນເພີ່ມ (ຕື້ກີບ) |
|---|---|---|---|
| 1.ເພີ່ມອັດຕາ ຄ່ານ້ຳມັນເຊື້ອໄຟ | 400 | 570 | 170 |
| 2.ຄ່າທຳນຽມຜ່ານທາງ ປະຈຳປີ | - | 45 | 45 |
| 3.ຄ່າຜ່ານຂົວທາງ (ເກັບຄືນໃໝ່) | - | 70 | 70 |
| 4.ຄ່າປັບໄໝລົດບັນທຸກໜັກເກີນ | 5 | 7 | 7 |
| 5.ຄ່າຊັກເພີ່ມເຄື່ອງດື່ມມີທາດເຫຼົ້າ | ? | ? | ? |
| 6.ອື່ນໆ (ເພີ່ມຈາກການໃຊ້ມືຖື) | ? | ? | ? |
| ລວມ | 405 | 692 | 292 |

## ບັນຫາ ເຈາະຈີ້ມ ແລະ ປຶກສາຫາລື

| ບັນຫາ | ວິທີແກ້ໄຂ (ທາງອອກ) | ມາດຕະການ |
|---|---|---|
| 1. ແຜນງົບປະມານ ບໍ່ພຽງພໍ ກັບ ຄວາມຕ້ອງການຈ່າຍ | ເຄັ່ງຄັດ, ປະຕິບັດ ວິໄນ ແຜນການ-ການເງິນ | ຈັດບຸລິມະສິດ (ສ້ອມແປງທາງ) |
| 2. ແຜນອະນຸມັດ ບໍ່ໄດ້ຕາມ ການ ເກັບລາຍຮັບຕົວຈິງ | ປັບປຸງກົດໝາຍ ງົບປະມານ | ສະເໜີ ກະຊວງ ການເງິນ ຊ່ວຍເປັນເຈົ້າການປັບປຸງ |
| 3. ຄວາມຕ້ອງການບຸລະນະຮັກສາ ຕາໜ່າງເສັ້ນທາງ ແລະ ໜີ້ສິນ ເພີ່ມຂຶ້ນ ທຸກໆປີ | ເອກະພາບ ສິດ, ພັນທະ ໃນການອະນຸມັດ ແລະ ການປະຕິບັດໂຄງການ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ | -ມີແຫຼ່ງທຶນ ຈຶ່ງອະນຸມັດ ໂຄງການ ແລະ ການປະມູນ<br>- ພັນທະໃນການຊຳລະສະສາງ |
| 4. ແຫຼ່ງລາຍຮັບ ບໍ່ສາມາດເພີ່ມຂຶ້ນ ຕາມແຜນການ ແລະ ບາງແຫຼ່ງ ຖືກຫຍຸດ | - ເພີ່ມອັດຕາເກັບລາຍ ຮັບ ແລະ ລາຍຮັບປົ່ມ ຊ້ອນ<br>- ຊອກແຫຼ່ງທຶນຊ່ວຍ ຈາກ ອົງການຕ່າງໆ | ສ້າງລະບົບໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການ ເກັບລາຍຮັບ ແລະ ພະນັກງານ |

## ຍທຂ PWT ບັນຫາ ເຈາະຈີ້ມ ແລະ ປຶກສາຫາລື (ຕໍ່)

| ບັນຫາ | ວິທີແກ້ໄຂ (ທາງອອກ) | ມາດຕະການ |
|---|---|---|
| 5. ຄຳເຫັນ (ຜົນກວດສອບ) ຈາກ ອົງການກວດສອບແຫ່ງລັດ | | |
| - 18 ໂຄງການ ເປັນໂຄງການກໍ່ສ້າງ ລວມມູນຄ່າ 26.5 ຕື້ກີບ (ປະມານ 7%) | ປັບປຸງດຳລັດໃໝ່ | -ມີໄລຍະເວລາ ໃນການສຳເລັດ ການປັບປຸງດຳລັດ<br>- ສິດໃນການອະນຸມັດ ແລະ ເງື່ອນໄຂອະນຸມັດໂຄງການ |
| - ຈຳນວນ ພະນັກງານຂອງກອງ ເລຂາ ບໍ່ພຽງພໍ (ມີໜ້ອຍ ໂພດ) | - ແບ່ງຂັ້ນຄຸ້ມຄອງສູນກາງ ແລະ ທ້ອງຖິ່ນ<br>- ຄວາມຮັບຜິດຊອບວຽກ ງານການເງິນ | - ປະເມີນຄວາມພ້ອມ ຂອງ ບັນດາພະແນກ ຍທຂ<br>- ທົດລອງບາງພະແນກ ຍທຂ<br>- ຝຶກອົບຮົມ, ເຄື່ອງຮັບໃຊ້ |

7

## ຍທຂ PWT ບັນຫາ ເຈາະຈີ້ມ ແລະ ປຶກສາຫາລື (ຕໍ່)

| ບັນຫາ | ວິທີແກ້ໄຂ (ທາງອອກ) | ສະພາບເສັ້ນທາງ (ມູນຄ່າ ລວມທາງຫຼວງແຫ່ງຊາດ) |
|---|---|---|
| 6. ເສັ້ນທາງຄືສາຍເລືອດ (ແທ້ບໍ່) | ປະຈຸບັນ ມູນຄ່າ ຍັງເຫຼືອ ປະມານ 50% ເທົ່ານັ້ນ | ຮອດປີ 2022 (10ປີ) |
| - ປະຈຸບັນ ງົບປະມານ ບູລະນະ ຮັກສາຕາໜ່າງ ເສັ້ນທາງຫຼວງ ແຫ່ງຊາດ ສະໜອງໄດ້ 30% | ສະເໜີ ລັດຖະບານ ພິຈາລະນາ ອະນຸມັດ ເພີ່ມອັດຕາຄ່າຊັກເພີ່ມ ນ້ຳມັນເຊື້ອໄຟ ແລະ ລາຍ ຮັບປົ່ມຊ້ອນ ອື່ນໆ | - ອີງໃສ່ບົດວິເຄາະຂອງ ສະຖາ ບັນ ຍທຂ ແລະ ແຜນຄວາມ ຕ້ອງການຂອງກອງທຶນທາງ<br><br>- ຈະເຫຼືອພຽງແຕ່ 26% |
| - ຖ້າຫາກວ່າ ງົບປະມານ ບູລະນະຮັກສາຕາໜ່າງ ເສັ້ນທາງຫຼວງແຫ່ງຊາດ ສະໜອງໄດ້ຮອດ 70% | - ຄືວິທີແກ້ໄຂ ຂ້າງເທິງ | - ຈະມີມູນຄ່າເພີ່ມຂື້ນ 10% ຈາກສະພາບເດີມ ໝາຍວ່າຈະເຫຼືອ 60% |

8

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

□□□□□□□□

**ກະຊວງໂຍທາທິການ ແລະ ຂົນສົ່ງ**

**ກົມການເງິນ**

## ສັງລວມເນື້ອໃນກອງປະຊຸມ ຍທຂ ທົ່ວປະເທດ ປີ 2014

- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການ ເລກທີ 16141/ຍທຂ, ລົງວັນທີ 04/09/2014 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລວມ ແລະ ບັນດາອານຸກຳມະການເພື່ອກະກຽມກອງປະຊຸມ ຍທຂ ທົ່ວປະເທດ ປີ 2014.
- ອີງຕາມບົດລາຍງານຂອງຫ້ອງການກະຊວງ ສະບັບເລກທີ 15642/ຍທຂ.ຫກ, ລົງວັນທີ 29/08/2014 ກ່ຽວກັບບັນດາຫົວຂໍ້ເນື້ອໃນກອງປະຊຸມ ຍທຂ ທົ່ວປະເທດ ປີ 2014.

## I. ກົມການເງິນ (ກອງທຶນບຸລະນະຮັກສາທາງຫຼວງ)

1.ສັງລວມວຽກງານ ແລະ ບັນຫາເຈາະຈີ້ມ

| ລດ | ບັນຫາ | | ວິທີແກ້ໄຂ (ທາງອອກ) | | ມາດຕະການ |
|---|---|---|---|---|---|
| **1.1. ດ້ານແຜນການ ແລະ ຄວາມຕ້ອງການຈ່າຍ** | | | | | |
| ກ. | ແຜນງົບປະມານ ບໍ່ພຽງພໍກັບຄວາມຕ້ອງການຈ່າຍ ແລະ ໜີ້ສິນຕ່າງໆ ເຊັ່ນ ສົກປີ 14/15 ມີຄວາມຕ້ອງການ ທັງໝົດ 2.308 ຕື້ກີບ ສະເພາະກອງທຶນທາງ 990 ຕື້ກີບ ລັດຖະບານອະນຸມັດໃຫ້ທັງໝົດ 522 ຕື້ກີບ, ໃນນີ້ກອງທຶນທາງ 370 ຕື້ກີບ (ເບິ່ງເອກະສານຊ້ອນທ້າຍ) | 1) | ເຄັ່ງຄັດ ໃນການຈັດສັນແຜນງົບປະມານ ຕາມບູລິມະສິດ ທີ່ມີລະບົບການປະເມີນ ແລະ ຄິດໄລ່ທີ່ແນ່ນອນ ເຊັ່ນ ລະບົບວາງແຜນສ້ອມແປງເສັ້ນທາງ (RMS, ProM), PCAP ຕ່າງໆ | 1) | ຈັດສັນງົບປະມານ ໃສ່ວຽກ ສ້ອມແປງປົກກະຕິ, ສ້ອມແປງນ້ອຍ ເພື່ອປ້ອງກັນ ການເປ່ເພ ໃຫຍ່ໆ ເຊັ່ນ ສ້າງແຜນງົບປະມານ ໃສ່ວຽກ ສ້ອມແປງປົກກະຕິ ແລະ ແກ້ໄຂຈຸດ ສ່ຽງທີ່ຈະກໍ່ໃຫ້ເກີດບັນຫາ ເສັ້ນທາງຖືກຕັດຂາດ, ດິນເຈື່ອນ... |
| | | 2) | ເພີ່ມອັດຕາເກັບລາຍຮັບ/ຊອກຄົ້ນ ແລະ ອະນຸມັດໃຫ້ເກັບແຫຼ່ງລາຍຮັບເພີ່ມຕື່ມ ເຊັ່ນ ຄ່າຊັກເພີ່ມ ນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ຮັບການ ອະນຸມັດຈາກລັດຖະບານ ໃຫ້ເພີ່ມມາ 3 ປີແລ້ວ | 2) | ຮັບປະກັນ ໃຫ້ເສັ້ນທາງຫຼວງແຫ່ງຊາດ ແລະ ທ້ອງຖິ່ນ ສາມາດແລ່ນໄດ້ ຕະຫຼອດປີ |
| ຂ. | ແຜນງົບປະມານ ອະນຸມັດ ບໍ່ສາມາດນຳໃຊ້ຕາມລາຍຮັບທັງໝົດ ທີ່ສາມາດເກັບໄດ້ຕົວຈິງ (ສະພາແຫ່ງຊາດອະນຸມັດ 3 ສົກປີຜ່ານມາ 370 ຕື້ກີບ ຫຼື ປະມານ 85 ເປີເຊັນ ລາຍຮັບ) | 1) | ປັບປຸງກົດໝາຍງົບປະມານ ໃຫ້ກອງທຶນທາງ ສາມາດດຳເນີນວຽກສອດຄ່ອງ ກັບ ເປົ້າໝາຍໃນການສ້າງຕັ້ງເບື້ອງຕົ້ນ. | 1) | ສະເໜີກະຊວງການເງິນ ເປັນເຈົ້າການໃນການ ນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ໃນການປັບປຸງກົດໝາຍງົບປະມານ ໃຫ້ທ່ວງທັນກັບສະພາບການ. |
| **1.2. ດ້ານລາຍຮັບ ແລະ ການຊອກຄົ້ນແຫຼ່ງລາຍຮັບ** | | | | | |
| ກ. | ຄວາມຕ້ອງການໃນການບູລະນະຮັກສາຕາໜ່າງເສັ້ນທາງ ແລະ ມູນຄ່າໜີ້ສິນຂອງກອງທຶນ ເພີ່ມຂຶ້ນ ໃນທຸກໆປີ. | 1) | ຄົ້ນຄ້ວາ ແລະ ເອກະພາບ ໃນການແບ່ງຄວາມຮັບຜິດຊອບ ໃນການອະນຸມັດວຽກ ແລະ ທຶນ ຂອງກອງທຶນທາງ ໃຫ້ຈະແຈ້ງ, ຊັດເຈນລະຫວ່າງສູນກາງ ແລະ ທ້ອງຖິ່ນ | 1) | - ສູນກາງ ແລະ ທ້ອງຖິ່ນ ຕ້ອງປະຕິບັດຕາມການຕົກລົງ ຢ່າງເຂັ້ມງວດ ແລະ ມີການປະຊຸມ ປຶກສາຫາລື ແລະ ຖອດຖອນບົດຮຽນ ເປັນປະຈຳຕາມວາລະທີ່ຕົກລົງຊັດເຈນ. - ພາກສ່ວນທີ່ອະນຸມັດງົບປະມານ (ອະນຸມັດໂຄງການ) ຕ້ອງໄດ້ຮັບຜິດຊອບໃນການຊຳລະສະສາງ. |
| | | 2) | ເອກະພາບ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງດ້ານແຜນການ, ການເງິນ-ບັນຊີ, ແຫລ່ງທຶນ ແລະ ການກວດສອບ | 2) | ສູນກາງ ແລະ ທ້ອງຖິ່ນ ຕ້ອງມີຄວາມພ້ອມທາງດ້ານ 1) ລະບົບການວາງແຜນການ, ລະບົບການເງິນ-ບັນຊີ ແລະ ກວດກາ 2) ດ້ານບຸກຄະລາກອນ ທີ່ມີຄວາມສາມາດ ແລະ 3) ດ້ານສິ່ງອຳນວຍຄວາມສະດວກ ໃນການປະຕິບັດວຽກງານ ແລະ ອື່ນໆ |

| ລດ | ບັນຫາ | ວິທີແກ້ໄຂ (ທາງອອກ) | ມາດຕະການ |
| --- | --- | --- | --- |
| ຂ. | ແຫຼ່ງລາຍຮັບຕົ້ນຕໍ ບໍ່ສາມາດເພີ່ມຂຶ້ນໄດ້ຕາມແຜນການ ແລະ ບາງແຫຼ່ງລາຍຮັບຖືກຫຍຸດເຊົາເປົ້າໝາຍໃນການເກັບເງິນຄ່າຜ່ານຂົວທາງ ແມ່ນເພື່ອປຸກຈິດສຳນຶກໃຫ້ປະຊາຊົນ ຫຼື ຜູ້ນຳໃຊ້ເສັ້ນທາງ ມີສ່ວນຮ່ວມ ແລະ ຮັກ ເສັ້ນທາງ ດັ່ງຄຳຂວັນ ທີ່ວ່າ ເສັ້ນທາງ ຄື ສາຍເລືອດລາວ | 1) ສະເໜີໃຫ້ ລັດຖະບານ ພິຈາລະນາຄືນໃຫ້ສາມາດເກັບລາຍຮັບເຂົ້າກອງທຶນ ແລະ ພິຈາລະນາ ເກັບລາຍຮັບເພີ່ມຂຶ້ນ.<br>2) ຍາດແຍ່ງ, ຊອກຄົ້ນ ແຫລ່ງທຶນຊ່ວຍເຫຼືອລ້າ ຈາກອົງການການເງິນສາກົນ ເຊັ່ນ ທະນາຄານໂລກ, ເອດີບີ, ຍີ່ປຸ່ນ... | 1) ສະເໜີລັດຖະບານ ອະນຸມັດ ເພີ່ມອັດຕາການເກັບຄ່າຊຸກເພີ່ມ ນ້ຳມັນເຊື້ອໄຟ ແລະ ລາຍຮັບອື່ນໆຄືນໃໝ່<br>2) ກະຊວງ ຍທຂ ສ້າງລະບຽບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດເກັບລາຍຮັບຕ່າງໆ ເຂົ້າກອງທຶນທາງ ໃຫ້ເຂັ້ມງວດ ແລະ ມີການປະເມີນຜົນ ເປັນໄລຍະ ລາຍງານ ຕໍ່ ລັດຖະບານ ເພື່ອຕ້ານປະກົດການຫຍໍ້ທໍ້ ແລະ ທາງສຽງຂອງສັງຄົມ ໂດຍສະເພາະ ວຽກງານ ແລະ ພະນັກງານ ເກັບເງິນຄ່າ ຜ່ານຂົວທາງ ແລະ ຊັ່ງຊັ່ງນ້ຳໜັກ... |
| **1.3. ບັນຫາອື່ນໆ (ຖ້າມີ)** | | | |
| ກ. | ຄຳເຫັນຂອງອົງການກວດສອບ ທີ່ຄ້າງຄາໃນສົກປີຜ່ານໆມາ ເຊັ່ນ: ໂຄງການກໍ່ສ້າງ 18 ໂຄງການ ມູນຄ່າ 26.5 ຕື້ກີບ (7 ເປີເຊັນ) ແລະ ພະນັກງານກອງເລຂາກອງທຶນ ບໍ່ພຽງພໍ | 1) ປັບປຸງດຳລັດ ກອງທຶນທາງໃໝ່ ໃຫ້ແທດເໝາະ<br>2) ແບ່ງຂັ້ນຄຸ້ມຄອງ/ຄວາມຮັບຜິດຊອບ ວຽກງານການເງິນ, ຈັດເກັບ ລາຍຮັບ, ຕິດຕາມ ແລະ ກວດກາ ໃຫ້ທ້ອງຖິ່ນຕາມເໝາະສົມ<br>3) ແຍກບັນຊີລາຍຮັບ ແລະ ລາຍຈ່າຍ ຂອງກອງທຶນທາງ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ສາມາດຕິດຕາມ, ກວດກາ ໄດ້ສະດວກ | 1) ປະຕິບັດ ວິໄນແຜນການ ແລະ ການເງິນ ຢ່າງເຂັ້ມງວດ<br>2) ສ້າງລະບົບການຄຸ້ມຄອງການເງິນ-ບັນຊີ ແລະ ການເບີກຈ່າຍ, ປະເມີນຜົນພະນັກງານໃນຂະແໜງການ, ຈັດຝຶກອົບຮົມ ແລະ ທົດລອງມອບຄວາມຮັບຜິດຊອບໃຫ້ທ້ອງຖິ່ນ |

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ການນຳໃຊ້ເງິນ ແລະ ການຈັດສັນງົບປະມານຂອງກອງທຶນທາງ

ວັນທີ 6 ມັງກອນ 2015 ຫົວໜ່ວຍ: ຕື້ກີບ

| ລຳດັບ | ໜ້າວຽກ | % ການນຳໃຊ້ທຶນຜ່ານມາ | | | | % ສະເໜີຈັດສັນໃນສົກປີ 2014-15 | | | |
|---|---|---|---|---|---|---|---|---|---|
| | | ດຳລັດ 09 | % ນຳໃຊ້ຕົວຈິງ | | %ສະເລ່ຍ | %ສະເໜີ | (ຕື້ ກີບ) | ຕ້ອງການ | ໝາຍເຫດ |
| 1 | **ເສັ້ນທາງຫຼວງທ້ອງຖິ່ນ** | **10** | | **7-49** | **24.4** | **15** | **55.50** | | |
| | ສ້ອມແປງປົກກະຕິ | | 0.1-10.7 | | 2.6 | | | | |
| | ສ້ອມແປງຕາມກຳໜົດ | | 0.3-26.6 | | 9.9 | | | | |
| | ສ້ອມແປງຂົວ | | 0.1-3.2 | | 1.1 | | | | |
| | ສ້ອມແປງສຸກເສີນ | | 0.1-11.5 | | 2.9 | | | | |
| | ພື້ນຟູ | | 1.4-12.4 | | 6.7 | | | | |
| | ຍົກລະດັບ | | | | | | | | |
| | ກໍ່ສ້າງ | | 0.1-10.2 | | 4.2 | | | | |
| | ປູຢາງ | | 0 | | | | | | |
| | ເບຕົງ | | 0 | | | | | | |
| 2 | **ຄວາມປອດໄພຕາມທະໜົນ** | **5** | **0.4-3.3** | | 1.8 | **5** | **18.50** | | ໄດ້ນຳໃຊ້ 3 ປີ (2012-14) |
| 3 | **ອພບ** | **5** | **0.3-5.4** | | 1.6 | **5** | **18.50** | | |
| 4 | **ເສັ້ນທາງຫຼວງແຫ່ງຊາດ** | **80** | | **48-83** | **63.68** | **70** | **259.00** | | **ໄດ້ພຽງແຕ່ 30% ຂອງແຜນ ຄວາມຕ້ອງການ** |
| | ສ້ອມແປງປົກກະຕິ | | 4.2-36.3 | | 17.7 | | | | |
| | ສ້ອມແປງຕາມກຳໜົດ | | 2.3-50.6 | | 18.6 | | | | |
| | ສ້ອມແປງຂົວ | | 0.9-9.4 | | 3.6 | | | | |
| | ສ້ອມແປງສຸກເສີນ | | 1.9-34.4 | | 18.8 | | | | |
| 5 | **ຄຸ້ມຄອງ ແລະ ບໍລິຫານ ກອງທຶນທາງ** | | 1-17.2 | | 11.5 | **5** | **18.50** | | **ການນຳໃຊ້ປີທີ່ 1 ຮອດ 86%** |
| | **ລວມຈຳນວນງົບປະມານສະພາອະນຸມັດ 3 ປີຜ່ານມາ** | | | | | **100** | **370.00** | | |
| 1 | **ສຳລະໜີ້/ສິນໄພພິບັດ/ສ້ອມແປງສຸກເສີນ** | | | | | **50** | **27.65** | | |
| | ສ້ອມແປງເສັ້ນທາງຫຼວງແຫ່ງຊາດ | | | | | | | | |
| | ພື້ນຟູ | | 0.2-43 | | 9.4 | | | | |
| | ຍົກລະດັບ | | 0 | | | | | | ອີງຕາມເງື່ອນໄຂການນຳໃຊ້ທຶນ ໄພພິບັດ |
| | ກໍ່ສ້າງ | | 0.3-0.8 | | 0.5 | | | | |
| | ປູຢາງ | | | | | | | | |
| | ເບຕົງ | | | | | | | | |
| 2 | **ເງິນແຮແກ້ໄຂວຽກໄພພິບັດ, ສຸກເສີນ ແລະ ອື່ນໆ** | | | | | **40** | **22.12** | | |
| 3 | **ທົດລອງ ໜ່ວຍງານສ້ອມແປງສຸກເສີນ ນະຄອນຫຼວງ** | | | | | **10** | **5.53** | | |
| | **ລາຍຮັບສ່ວນເກີນ/ຍັງເຫຼືອ ສົກປີ 2013/14** | | | | | **100** | **55.30** | | **ເງິນລາຍຮັບເຫລືອຈາກສະພາ ອະນຸມັດ (15%)** |
| | **ລວມທັງໝົດ** | **100** | | | | **100** | **425.30** | | |

**ໝາຍເຫດ:**

- ການນຳໃຊ້ທຶນ ໃນຕາໜ່າງທາງທ້ອງຖິ່ນ 13 ປີຜ່ານມາແມ່ນຢູ່ ແຕ່ 7 - 49 ເປີເຊັນ ບໍ່ໄປຕາມ ດຳລັດ 09/ນຍ
- ໜ້າວຽກທີ່ນຳໃຊ້ ເຊັ່ນ ພື້ນຟູເສັ້ນທາງ (LRN 12% # 7% ແລະ NRN 43% # 9%) ວຽກກໍ່ສ້າງ (LRN 5% ແລະ NRN 0.5% ) ບໍ່ໄປຕາມ ດຳລັດ 09/ນຍ (ໃນການສະເໜີໃໝ່ ອາດຈະມີແຜນໄວ້ ໃນຮ່ວງແຮໄວ້ ສຳລະໜີ້/ໄພພິບັດ/ສ້ອມແປງສຸກເສີນ ປະມານ 5%) ແກ້ໄຂຕາມທິດຊີ້ນຳຂອງຂັ້ນເທິງ
- ບ້ວງເງິນບໍລິຫານກອງທຶນ ຜ່ານມານຳໃຊ້ໃນການບໍລິຫານ, ຄະນະທີ່ປຶກສາ, ກອງເລຂາ, ບັນດາຫ້ອງການກອງທຶນ ແລະ ກໍ່ສ້າງຫ້ອງການຈຸດເກັບເງິນ ໃນແຕ່ລະແຂວງ ໃນເມື່ອກ່ອນ.
- ບ້ວງເງິນບໍລິຫານກອງທຶນ ອາດຈະນຳໃຊ້ໃນວຽກບໍລິຫານຂອງພາກສ່ວນກ່ຽວຂ້ອງກັບວຽກງານ, ຈັດຊື້ພາຫະນະ-ອຸປະກອນ ຕ່າງໆ, ປະຊຸມ, ສຳມະນາ, ຝຶກອົບຮົມ-ທັດສະນະສຶກສາ ຫຼື ຈັດຈ້າງທີ່ປຶກສາພາຍໃນ ຫຼື ຕ່າງປະເທດ.
- ບັນດາວຽກບຸລິມມະສິດ, ເງິນສົມທົບກັບບັນດາໂຄງການຮ່ວມມື, ໂຄງການກໍ່ສ້າງ ແລະ ອື່ນໆ

**ສັງເກດ:**

- ບັນດາວຽກທີ່ປະຕິບັດຜ່ານມາ ມີເປີເຊັນ ການນຳໃຊ້ ໃນແຕ່ລະສົກປີ ທີ່ແຕກໂຕນກັນຫຼາຍ
- ການສະຫຼຸບ, ຄິດໄລ່ ເປີເຊັນ ແມ່ນຂໍ້ມູນຕົວຈິງ ທີ່ປະຕິບັດ ແຕ່ປີ 2001 ຫາ 2013 ປະມານ 13 ປີ
- ການຈັດສັນແຜນເງິນ ແມ່ນພະຍາຍາມອີງໃສ່ ວົງເງິນທີ່ສະພາ ອະນຸມັດຜ່ານມາ 3 ປີ ເທົ່າເກົ່າ 370 ຕື້ກີບ ຕົກປະມານ 85% ສ່ວນທີ່ເຫຼືອ ຈະຢູ່ໃນຮ່ວງເງິນແຮ ຂໍ້ 6
- ຄວນສ້າງລະບຽບການທີ່ມີເງື່ອນໄຂຂອງໜ້າວຽກ ແລະ ຂັ້ນຕອນການອະນຸມັດ ເພື່ອຮອງຮັບການນຳໃຊ້ທຶນຢູ່ໃນຮ່ວງເງິນແຮ ໃນຂໍ້ 6 ເພື່ອເປັນບ່ອນອີງໃນການປ້ອງກັນຕໍ່ ພາຍນອກ.
- ການຊຳລະໜີ້ສິນຕ່າງໆ ຈະມີນະໂຍບາຍແນວໃດ ?, ເຊັ່ນ 35 % ຂອງເສັ້ນທາງຫຼວງແຫ່ງຊາດ ແລະ ທ້ອງຖິ່ນ ໂດຍເອົາໃນງົບປະມານປົກກະຕິ ໃນແຕ່ລະສົກປີ ບໍ່? ຫຼື ນຳໃຊ້ຮ່ວງ ຂໍ້ 6?.

ເອກະສານຊ້ອນທ້າຍ 01

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***********

ກະຊວງ ໂຍທາທິການ ແລະ ຂົນສົ່ງ

**ຕາຕະລາງສັງລວມຄວາມຕ້ອງການດ້ານງົບປະມານລົງທຶນທັງໝົດ ສົກປີ 2014-2015 ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ**

ຫົວໜ່ວຍ: ກີບ

| ລາຍການ | ຈນ ຄກ | ຄວາມຕ້ອງການທັງໝົດໃນ ສົກປີ 14-15 | ການຈັດສັນຕາມສະພາອະນຸມັດ ສົກປີ 2014-2015 | ຄວາມຕ້ອງການຫຼັງການຈັດສັນ ຕາມການອະນຸມັດຂອງສະພາ ສົກປີ 2014-2015 |
|---|---|---|---|---|
| ລວມທັງໝົດ [ 1)+2)+3) ] | 621 | 2,308,027,394,203 | 522,000,000,000 | 1,433,670,111,266 |
| ລວມທັງໝົດ ບ້ວງສະພາອະນຸມັດ [ 1)+2) ] | 461 | 1,900,331,569,274 | 522,000,000,000 | 1,025,974,286,336 |
| 1) ບ້ວງປົກກະຕິ (ບໍ່ລວມກອງທຶນທາງ) | 133 | 911,228,925,379 | 152,000,000,000 | 406,871,642,441 |
| 1.1 ຄກ ປົກກະຕິ | 94 | 511,871,642,441 | 105,000,000,000 | 406,871,642,441 |
| 1.2 ຄກ ບູລິມະສິດ | 15 | 349,182,932,938 | 30,000,000,000 | |
| 1.3 ຄກ ນຳໃຊ້ທຶນນ້ຳເທີນ 2 | 24 | 50,174,350,000 | 17,000,000,000 | |
| 2) ບ້ວງປົກກະຕິກອງທຶນທາງ | 328 | 989,102,643,895 | 370,000,000,000 | 619,102,643,895 |
| 2.1 ທາງຫຼວງແຫ່ງຊາດ | 253 | 882,151,206,917 | 284,483,001,416 | 597,668,205,501 |
| 2.2 ທາງຫຼວງທ້ອງຖິ່ນ | 59 | 83,038,036,978 | 61,603,598,584 | 21,434,438,394 |
| 2.3 ບໍລິຫານກອງທຶນທົ່ວປະເທດ, ໂຄງການ 4ເຂດ | 13 | 8,713,400,000 | 8,713,400,000 | 0 |
| 2.4 ແບ່ງໃຫ້ອພບ ນະຄອນຫຼວງວຽງຈັນ | 2 | 2,600,000,000 | 2,600,000,000 | 0 |
| 2.5 ແບ່ງໃຫ້ວຽກຄວາມປອດໄພຕາມທ້ອງຖະໜົນ | 1 | 12,600,000,000 | 12,600,000,000 | 0 |
| 3) ບ້ວງອື່ນໆ (ຊຳລະໜີ້,ໄພພິບັດ,ນະໂຍບາຍ...) | 160 | 407,695,824,930 | | 407,695,824,930 |

ນະຄອນຫຼວງວຽງຈັນ, ວັນທີ:________________

**ຫົວໜ້າກົມແຜນການ ແລະການຮ່ວມມື** **ພະແນກແຜນການ**